# Skills on court enforcement
# ທັກສະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 6
## Proceedings against seized or seized property
## ການດຳເນີນການຕໍ່ຊັບທີ່ອາຍັດ ຫຼື ຍຶດ

### 1. ການດຳເນີນການຕໍ່ຊັບທີ່ອາຍັດ ຫຼື ຍຶດ ໂດຍການຕົກລົງຂອງຄູ່ຄວາມ

ຢູ່ ສປປ ລາວ ກ່ຽວກັບການດຳເນີນການຕໍ່ຊັບທີ່ອາຍັດ ຫຼື ຍຶດ, ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງຮຽກຄູ່ຄວາມເຂົ້າມາເພື່ອຕົກລົງກ່ຽວກັບລາຄາຊັບ, ການຕົກລົງດັ່ງກ່າວຕ້ອງເຮັດບົດບັນທຶກ ແລະ ໃຫ້ຖືເອົາລາຄານັ້ນເປັນລາຄາປະກາດຂາຍຕາມກົດໝາຍ ຊຶ່ງການຕົກລົງລາຄາດັ່ງກ່າວ ຄູ່ຄວາມສາມາດຕົກລົງໄດ້ທຸກຂັ້ນຕອນຂອງການປະຕິບັດຄຳຕັດສິນຂອງສານ ແລະ ແນະນຳໃຫ້ຜູ້ເປັນເຈົ້າຂອງຊັບດັ່ງກ່າວໄປຂາຍພາຍໃນກຳນົດເວລາທີ່ກຳນົດໄວ້ໃນກົດໝາຍ, ແຕ່ບໍ່ໃຫ້ຕໍ່າກວ່າລາຄາທີ່ຄູ່ຄວາມໄດ້ປະເມີນກັນໃນເບື້ອງຕົ້ນ ຊຶ່ງການແນະນຳດັ່ງກ່າວຕ້ອງເຮັດບົດບັນທຶກ ແລະ ລົງລາຍໄວ້ເປັນຫຼັກຖານ.

ນອກຈາກນີ້ ບົນພື້ນຖານຄວາມເປັນເອກະພາບ ຄູ່ຄວາມສາມາດສະເໜີເອົາຜູ້ຊ່ຽວຊານ ຫຼື ນິຕິບຸກຄົນໃດໜຶ່ງເພື່ອມາຕີລາຄາຊັບ, ການຕີລາຄາຊັບໃນກໍລະນີນີ້ໃຫ້ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານອອກຂໍ້ຕົກລົງໃຫ້ຊ່ຽວຊານ ຫຼື ນິຕິບຸກຄົນດຳເນີນການຕີລາຄາຊັບໂດຍກຳນົດເວລາ, ສະຖານທີ່, ຊັບທີ່ເປັນເປົ້າໝາຍ, ຄວາມຮັບຜິດຊອບຂອງຜູ້ຕີລາຄາ, ຜົນຕອບແທນ ແລະ ບັນຫາສຳຄັນອື່ນ, ພາຍຫຼັງສຳເລັດໃຫ້ຖືເອົາລາຄານັ້ນເປັນລາຄາປະກາດຂາຍຕາມຂັ້ນຕອນຂອງກົດໝາຍ.

### 2. ການດຳເນີນການຕໍ່ຊັບທີ່ອາຍັດ ຫຼື ຍຶດ ໂດຍແຕ່ງຕັ້ງຄະນະກຳມະການຕີລາຄາຊັບ

ກໍລະນີຄູ່ຄວາມບໍ່ສາມາດຕົກລົງລາຄາຊັບໄດ້, ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານ ຕ້ອງສະເໜີຕໍ່ເຈົ້າຄອງນະຄອນຫຼວງ ຫຼື ເຈົ້າແຂວງ ໃນກໍລະນີຄະດີຖືກປະຕິບັດຢູ່ອົງການປະຕິບັດຄຳຕັດສິນຂອງສານຂັ້ນແຂວງ ຫຼື ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານສະເໜີຕໍ່ເຈົ້າເມືອງ ຫຼື ເຈົ້ານະຄອນ ຫຼື ຫົວໜ້າເທດສະບານໃນກໍລະນີທີ່ຄະດີຖືກປະຕິບັດຢູ່ຂັ້ນເມືອງ ເພື່ອອອກຂໍ້ຕົກລົງແຕ່ງຕັ້ງຄະນະກຳມະການຕີລາຄາຊັບ, ຂໍ້ຕົກລົງແຕ່ງຕັ້ງຄະນະກຳມະການດັ່ງກ່າວຕ້ອງສົ່ງໃຫ້ຜູ້ຖືກແຕ່ງຕັ້ງ ແລະ ອົງການຂອງຜູ້ຖືກແຕ່ງຕັ້ງຮັບຊາບ ເພື່ອອຳນວຍຄວາມສະດວກໃນການປະຕິບັດ.

ຄະນະກຳມະການຕີລາຄາຊັບປະກອບດ້ວຍພະນັກງານປະຕິບັດຄຳຕັດສິນຂອງສານ, ຜູ້ຕາງໜ້າສຳນັກງານອົງການລັດທີ່ກ່ຽວຂ້ອງ, ອົງການຈັດຕັ້ງສັງຄົມ, ຜູ້ຊ່ຽວຊານ ຫຼື ຜູ້ທີ່ມີປະສົບການທີ່ກ່ຽວຂ້ອງ, ນາຍບ້ານ ແລະ ບຸກຄົນອື່ນທີ່ເຫັນວ່າມີຄວາມຈຳເປັນ, ຄະນະກຳມະການດັ່ງກ່າວມີບົດບາດໃນການຕີລາຄາຊັບໃນເວລາປະຕິບັດຄຳຕັດສິນຂອງສານຕາມຂໍ້ຕົກລົງແຕ່ງຕັ້ງ ແລະ ຄະນະກຳມະການດັ່ງກ່າວຈະສິ້ນສຸດລົງເມື່ອປະຕິບັດ ໜ້າທີ່ສຳເລັດ, ກ່ອນຈະຕີລາຄາຊັບຕ້ອງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນກ່ຽວກັບຊັບທີ່ຈະຕີລາຄາໃຫ້ຖືກຕາມຄວາມເປັນຈິງ, ຄະນະກຳມະການທີ່ຖືກແຕ່ງຕັ້ງຕ້ອງໄດ້ເຫັນ ແລະ ຮູ້ສະພາບຂອງຊັບແລ້ວຈຶ່ງປຶກສາຫາລື ແລະ ຕີລາຄາຢ່າງພາວະວິໄສ

ໂດຍອີງໃສ່ຂໍ້ມູນ ແລະ ລະບຽບການທີ່ກ່ຽວຂ້ອງ ພ້ອມທັງເຮັດບົດບັນທຶກລົງລາຍເຊັນໄວ້ເພື່ອເປັນບ່ອນອີງ. ການຕີລາຄາຊັບ ແມ່ນການປະເມີນລາຄາ ຫຼື ກຳນົດມູນຄ່າຊັບຕາມສະພາບຄວາມເປັນຈິງຂອງຊັບແຕ່ລະໄລຍະ ໂດຍຄະນະກຳມະການຕີລາຄາຊັບ.

ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານ ເປັນຜູ້ເຊີນຄະນະກຳມະການ ແລະ ເຈົ້າຂອງຊັບເຂົ້າຮ່ວມການຕີລາຄາຊັບ, "ໃນກໍລະນີເຈົ້າຂອງຊັບຫຼົບຫຼີກບໍ່ເຂົ້າຮ່ວມໃຫ້ຄະນະກຳມະການບັນທຶກໄວ້, ພາຍຫຼັງຕີລາຄາສຳເລັດແລ້ວຕ້ອງສົ່ງບົດບັນທຶກຕີລາຄາໃຫ້ເຈົ້າຂອງຊັບ, ໂຈດ, ຈຳເລີຍ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຊາບພາຍໃນກຳນົດເຈັດວັນ"[1].

ການແຕ່ງຕັ້ງຄະນະກຳມະການດັ່ງກ່າວ, ເຈົ້າຄອງນະຄອນຫຼວງ ຫຼື ເຈົ້າແຂວງ ຫຼື ເຈົ້າເມືອງ, ເຈົ້ານະຄອນ ອາດຈະແຕ່ງຕັ້ງສຳລັບແຕ່ລະຄະດີ ຫຼື ອາດຈະແຕ່ງເປັນຄະນະໜຶ່ງ ສຳລັບຫຼາຍຄະດີໃນເວລາດຽວກັນກໍໄດ້.

"ພາຍຫຼັງທີ່ມີການຕີລາຄາແລ້ວ ຖ້າຫາກວ່າ ໂຈດ, ຈຳເລີຍ, ບຸກຄົນທີສາມ, ເຈົ້າຂອງຊັບ ຫາກບໍ່ພໍໃຈຕໍ່ການຕີລາຄາຊັບ ມີສິດຄັດຄ້ານໂດຍຍື່ນຄຳຮ້ອງຂໍພ້ອມທັງສະເໜີເຫດຜົນທີ່ບໍ່ພໍໃຈພາຍໃນກຳນົດ 7 ວັນລັດຖະການ ຕໍ່ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງຕາມຂັ້ນດັ່ງນີ້:

- ກໍລະນີການຕີລາຄາຂອງຄະນະກຳມະການຂັ້ນເມືອງ, ນະຄອນ, ເທດສະບານ ໃຫ້ຍື່ນຄຳຮ້ອງຕໍ່ອົງການປະຕິບັດຄຳຕັດສິນຂອງສານ;

- ກໍລະນີການຕີລາຄາຂອງຄະນະກຳມະການຂັ້ນແຂວງ, ນະຄອນຫຼວງ ໃຫ້ຍື່ນຄຳຮ້ອງຕໍ່ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ"[2].

**3. ການພິຈາລະນາຄຳຮ້ອງຂໍການຕີລາຄາຊັບ**

ເມື່ອໄດ້ຮັບຄຳຮ້ອງຂໍກ່ຽວກັບການຕີລາຄາຊັບແລ້ວ, ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ຫຼື ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງຄົ້ນຄວ້າໃຫ້ສຳເລັດພາຍໃນກຳນົດ 10 ວັນລັດຖະການ, ຖ້າເຫັນວ່າບໍ່ມີເຫດຜົນກໍໃຫ້ແຈ້ງຕອບເປັນລາຍລັກອັກສອນຕໍ່ເຈົ້າຂອງຄຳຮ້ອງພາຍໃນກຳນົດ 3 ວັນລັດຖະການ, ກໍລະນີເຫັນວ່າມີເຫດຜົນພຽງພໍຕ້ອງແຈ້ງໃຫ້ຄະນະກຳມະການຕີລາຄາຊັບຊາບພາຍໃນກຳນົດ 3 ວັນລັດຖະການ ເພື່ອອອກຄຳສັ່ງລົບລ້າງການຕີລາຄາຜ່ານມາ ແລະ ໃຫ້ຕີລາຄາຄືນໃໝ່.

ພາຍຫຼັງທີ່ມີການຕີລາຄາຊັບຂອງຄະນະກຳມະການແລ້ວ, ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງການໃຫ້ເຈົ້າຂອງຊັບ ເພື່ອໃຫ້ຜູ້ກ່ຽວປະກາດຂາຍຊັບດ້ວຍຕົນເອງພາຍໃນກຳນົດ 45 ວັນ ນັບແຕ່ວັນໄດ້ຮັບແຈ້ງການເປັນຕົ້ນໄປ, ເມື່ອມີຜູ້ມາສະເໜີຊື້ຊັບດັ່ງກ່າວ ຜູ້ເປັນເຈົ້າຂອງຊັບ ຕ້ອງແນະນຳໃຫ້ຜູ້ກ່ຽວເຂົ້າໄປພົວພັນການຊື້ຢູ່ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ແລະ ຊຳລະເງິນຕາມລາຄາຊັບໃຫ້ພະນັກງານການເງິນຂອງອົງການປະຕິບັດຄຳຕັດສິນຂອງສານ (ບໍ່ອະນຸຍາດໃຫ້ເຈົ້າຂອງຊັບຊື້ - ຂາຍຊັບເອງໂດຍບໍ່ຜ່ານອົງການປະຕິບັດຄຳຕັດສິນຂອງສານ) ຊຶ່ງຕ້ອງໄດ້ເຮັດບົດບັນທຶກເປັນລາຍລັກອັກສອນໃນການຊຳລະ, ຫຼັງຈາກນັ້ນ ອົງການປະຕິບັດຄຳຕັດສິນຂອງສານຈຶ່ງປະກອບເອກະສານທີ່ຈຳເປັນໃຫ້ຜູ້ຊື້ເຊັ່ນ: ໃບຢັ້ງຢືນການຊື້ - ຂາຍ, ໃບຮັບເງິນ, ໃບສະເໜີ ແລະ ອື່ນໆທີ່ຈຳເປັນ ເພື່ອໃຫ້ຜູ້ຊື້ນຳໄປປະກອບການຂໍຂຶ້ນທະບຽນນຳພາກສ່ວນທີ່ກ່ຽວຂ້ອງຕາມລະບຽບການ.

---

[1] ມາດຕາ 17 ຂອງດຳລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເລກທີ 158/ລບ ລົງວັນທີ 4 ມິຖຸນາ 2013

[2] ຄຳແນະນຳຂອງລັດຖະມົນຕີກະຊວງຍຸຕິທຳກ່ຽວກັບການຕີລາຄາ, ການຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເລກທີ 447/ກຍ ລົງວັນທີ 5 ເມສາ 2019

ສຳລັບເງິນທີ່ໄດ້ຈາກການຂາຍຊັບນັ້ນ ຕ້ອງນຳມາໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ໃຊ້ແທນໜີ້ສິນຕາມມູນຄ່າທີ່ກຳນົດໄວ້ໃນຄຳຕັດສິນຂອງສານ, ໃນກໍລະນີທີ່ມູນຄ່າຂອງຊັບທີ່ຂາຍຫາກບໍ່ພຽງພໍ ຜູ້ຖືກປະຕິບັດຄຳຕັດສິນຂອງສານຕ້ອງຫາມາຕື່ມໃສ່ຈົນຄົບຖ້ວນຕາມຈຳນວນທີ່ສານຕັດສິນ, ຖ້າຫາກມູນຄ່າຂອງຊັບທີ່ຂາຍນັ້ນຫາກເຫຼືອ ຕ້ອງສົ່ງຄືນໃຫ້ເຈົ້າຂອງຊັບ ແລະ ເມື່ອປະຕິບັດຄຳຕັດສິນຂອງສານສຳເລັດແລ້ວ ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງສະຫຼຸບລາຍງານ ແລະ ສະເໜີຫົວໜ້າອົງການປະຕິບັດຄຳຕັດສິນຂອງສານເພື່ອອອກຄຳສັ່ງປິດການປະຕິບັດຄຳຕັດສິນດັ່ງກ່າວຕາມກົດໝາຍກຳນົດໄວ້.

ກໍລະນີທີ່ໝົດກຳນົດເວລາໃນການມອບໃຫ້ເຈົ້າຂອງຊັບປະກາດຂາຍເອງແລ້ວ ແຕ່ຍັງບໍ່ມີໃຜມາພົວພັນຊື້ ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານ ຕ້ອງອອກແຈ້ງການປະກາດຂາຍຢ່າງກວ້າງຂວາງ ໂດຍຜ່ານສື່ມວນຊົນຕ່າງໆເປັນຕົ້ນ ໜັງສືພິມ, ໂທລະພາບ, ວິທະຍຸ ແລະ ອື່ນໆ ຕາມເງື່ອນໄຂຂອງແຕ່ລະທ້ອງຖິ່ນພາຍໃນກຳນົດ 30 ວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ.

"ຜ່ານການປະກາດຂາຍຊັບຢ່າງກວ້າງຂວາງຂອງອົງການປະຕິບັດຄຳຕັດສິນຂອງສານ, ແຕ່ບໍ່ມີບຸກຄົນໃດມາພົວພັນຊື້, ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງຮຽກເຈົ້າຂອງຊັບ ຫຼື ຜູ້ຖືກປະຕິບັດຄຳຕັດສິນຂອງສານເຂົ້າມາອົງການປະຕິບັດຄຳຕັດສິນຂອງສານເພື່ອແຈ້ງໃຫ້ຊາບກ່ຽວກັບການຫຼຸດລາຄາຊັບທີ່ໄດ້ປະກາດຂາຍນັ້ນ, ໃນກໍລະນີທີ່ຜູ້ກ່ຽວບໍ່ມີວິທີແກ້ໄຂທີ່ສອດຄ່ອງ ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານຕ້ອງອອກຄຳສັ່ງຫຼຸດລາຄາຊັບລົງ ແຕ່ບໍ່ເກີນ 20% ຂອງມູນຄ່າທີ່ຄະນະກຳມະການໄດ້ຕີລາຄາ, ການຫຼຸດລາຄາຊັບແມ່ນສາມາດຫຼຸດໄດ້ເທື່ອດຽວເທົ່ານັ້ນ ຊຶ່ງການຫຼຸດລາຄາດັ່ງກ່າວອົງການປະຕິບັດຄຳຕັດສິນຂອງສານຕ້ອງໄດ້ຄົ້ນຄວ້າເຫດ ແລະ ຜົນໃຫ້ສອດຄ່ອງກັບຄວາມເປັນຈິງຂອງສະພາບເສດຖະກິດ-ສັງຄົມຢ່າງພາວະວິໄສ ຈຶ່ງອອກຄຳສັ່ງຫຼຸດລາຄາ, ຄຳສັ່ງດັ່ງກ່າວຕ້ອງສົ່ງໃຫ້ເຈົ້າຂອງຊັບ, ໂຈດ, ຈຳເລີຍ, ບຸກຄົນທີສາມ, ອົງການປົກຄອງບ້ານທີ່ກ່ຽວຂ້ອງ ແລະ ຄະນະກຳມະການຕີລາຄາຊັບ ພາຍໃນກຳນົດເຈັດວັນ ນັບແຕ່ວັນອອກຄຳສັ່ງເປັນຕົ້ນໄປ"[3].

"ພາຍຫຼັງໄດ້ອອກຄຳສັ່ງຫຼຸດລາຄາຊັບແລ້ວ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງໃຫ້ເຈົ້າຂອງຊັບເປັນຜູ້ຂາຍເອງພາຍໃນກຳນົດເວລາ 30 ວັນ, ຖ້າໝົດກຳນົດເວລາດັ່ງກ່າວ ແຕ່ຜູ້ກ່ຽວບໍ່ສາມາດຂາຍໄດ້, ຫົວໜ້າອົງການປະຕິບັດຄຳຕັດສິນຂອງສານຕ້ອງອອກແຈ້ງການປະກາດຂາຍໃໝ່ຢ່າງກວ້າງຂວາງໂດຍຜ່ານສື່ຕ່າງໆເຊັ່ນ: ໜັງສືພິມ, ວາລະສານ, ໂທລະພາບ, ວິທະຍຸ ແລະ ອື່ນໆ ຕາມເງື່ອນໄຂຂອງແຕ່ລະທ້ອງຖິ່ນພາຍໃນກຳນົດ 30 ວັນນັບແຕ່ວັນອອກແຈ້ງການເປັນຕົ້ນໄປ"[4].

## 4. ການປະມູນຂາຍຊັບ

ກໍລະນີການປະກາດຂາຍຊັບດ້ວຍອົງການປະຕິບັດຄຳຕັດສິນຂອງສານ ຫາກມີຜູ້ສົນໃຈຊື້ຊັບແຕ່ສອງຄົນຂຶ້ນໄປຕ້ອງຂາຍດ້ວຍການປະມູນ, ການປະມູນຂາຍຊັບປະກອບມີ ສອງວິທີຄື: ການປະມູນແບບເປີດເຜີຍ ແລະ ການປະມູນແບບປິດລັບ.

[3] ມາດຕາ 19 ຂອງດຳລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເລກທີ 158/ລບ ລົງວັນທີ 4 ມິຖຸນາ 2013

[4] ມາດຕາ 20 ຂອງດຳລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເລກທີ 158/ລບ ລົງວັນທີ 4 ມິຖຸນາ 2013

- ການປະມູນແບບເປີດເຜີຍ: ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຕ້ອງການປະມູນລ່ວງໜ້າ ສິບວັນ ລັດຖະການ ກ່ອນວັນປະມູນ, ແຈ້ງລາຄາ, ລະບຽບ, ວັນ, ເວລາ ແລະ ສະຖານທີ່ປະມູນ, ຈາກນັ້ນ ໃຫ້ຜູ້ເຂົ້າຮ່ວມການປະມູນແຕ່ລະຄົນສະເໜີລາຄາ ຕໍ່ຄະນະກຳມະການຢ່າງເປີດເຜີຍນັບແຕ່ຜູ້ທີໜຶ່ງຮອດຜູ້ສຸດທ້າຍ, ຜູ້ເຂົ້າຮ່ວມສາມາດສະເໜີລາຄາຫຼາຍເທື່ອກໍໄດ້ ຫຼື ຜູ້ໄດ້ສະເໜີລາຄາແລ້ວ ສາມາດໃຫ້ລາຄາສູງຂຶ້ນຕື່ມອີກກໍໄດ້. ຫຼັງຈາກສິ້ນສຸດການປະມູນ ຄະນະກຳມະການ ຕ້ອງສະຫຼຸບ ແລ້ວເຮັດບົດບັນທຶກ ແລະ ລົງລາຍເຊັນໄວ້.

- ການປະມູນແບບປິດລັບ: "ອົງການປະຕິບັດຄຳຕັດສິນຂອງສານຕ້ອງແຈ້ງການລ່ວງໜ້າ 10 ວັນກ່ອນວັນປະມູນ ພ້ອມທັງຂາຍຊອງປະມູນ, ລາຄາຊອງປະມູນແມ່ນຂຶ້ນກັບການຕົກລົງຂອງຄະນະກຳມະການແຕ່ສູງສຸດຊອງໜຶ່ງບໍ່ໃຫ້ກາຍ 300.000 ກີບ"[5], ຜູ້ທີ່ມີຈຸດປະສົງຈະປະມູນສາມາດຍື່ນຊອງປະມູນໃນມື້ປະມູນ ຫຼື ກ່ອນນັ້ນກໍໄດ້.

"ຄະນະກຳມະການປະມູນຂາຍຊັບ ປະກອບດ້ວຍພະນັກງານປະຕິບັດຄຳຕັດສິນຂອງສານ, ຜູ້ຕາງໜ້າສຳນັກງານອົງການລັດ, ອົງການສັງຄົມ, ຜູ້ຊ່ຽວຊານ ຫຼື ຜູ້ທີ່ມີປະສົບການທີ່ກ່ຽວຂ້ອງ, ນາຍບ້ານ ແລະ ບຸກຄົນອື່ນທີ່ເຫັນວ່າມີຄວາມຈຳເປັນ ຊຶ່ງແມ່ນເຈົ້າຄອງນະຄອນຫຼວງ ຫຼື ເຈົ້າແຂວງເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງພະແນກຍຸຕິທຳນະຄອນຫຼວງ ຫຼື ພະແນກຍຸຕິທຳແຂວງ, ຫຼື ເຈົ້າເມືອງ, ເຈົ້ານະຄອນເປັນຜູ້ແຕ່ງຕັ້ງຕາມການສະເໜີຂອງເຈົ້ານະຄອນ, ຫົວໜ້າເທດສະບານ ຫຼື ຫ້ອງການຍຸຕິທຳ"[6].

ຜູ້ຊະນະການປະມູນຊັບ ແມ່ນຜູ້ທີ່ໃຫ້ລາຄາສູງສຸດ ແລະ ຕ້ອງຊຳລະເງິນຢ່າງໜ້ອຍ 10% ຂອງລາຄາທີ່ຕົນເອງປະມູນໄດ້ ພາຍໃນກຳນົດ 3 ວັນ ນັບແຕ່ວັນປະມູນເປັນຕົ້ນໄປ, ສ່ວນທີ່ເຫຼືອຕ້ອງຊຳລະໃຫ້ສຳເລັດພາຍໃນກຳນົດ 30 ວັນ, ຖ້າກາຍກຳນົດດັ່ງກ່າວໃຫ້ຖືເປັນການສະລະສິດ, ສ່ວນເງິນທີ່ຊຳລະກ່ອນນັ້ນຈະບໍ່ສົ່ງຄືນ ແລະ ຈະຖືເອົາຜູ້ເຂົ້າຮ່ວມປະມູນທີ່ໃຫ້ລາຄາຖັດລົງມາ ເປັນຜູ້ມີບູລິມະສິດໃນການຊື້ຊັບທີ່ປະມູນຂາຍນັ້ນ.

ຜູ້ຊະນະການປະມູນ ບໍ່ມີສິດຂາຍຊັບທີ່ຍັງຢູ່ໃນຄວາມຮັບຜິດຊອບຂອງອົງການປະຕິບັດຄຳຕັດສິນຂອງສານ, ຊັບທີ່ຖືກປະມູນຈະເປັນກຳມະສິດຂອງຜູ້ປະມູນໄດ້ກໍຕໍ່ເມື່ອຜູ້ຊະນະການປະມູນໄດ້ປະຕິບັດພັນຂອງຕົນຄົບຖ້ວນແລ້ວ ແລະ ອົງການປະຕິບັດຄຳຕັດສິນຂອງສານໄດ້ອອກໃບຢັ້ງຢືນການຊື້ - ຂາຍ, ໃບຮັບເງິນ,ໃບສະເໜີ ແລະ ອື່ນໆຫາພາກສ່ວນທີ່ກ່ຽວຂ້ອງເພື່ອອອກໃບອະນຸຍາດນຳໃຊ້ ຫຼື ຂຶ້ນທະບຽນຕາມກົດໝາຍ.

ເຖິງຢ່າງໃດກໍຕາມ, ກ່ຽວກັບການປະກາດຂາຍຊັບກໍເປັນບັນຫາທີ່ມີຄວາມຫຍຸ້ງຍາກ ເນື່ອງຈາກວ່າຜ່ານການປະກາດຂາຍ ແລະ ມີການຫຼຸດລາຄາຕາມຂັ້ນຕອນຂອງລະບຽບ ແລະ ກົດໝາຍແລ້ວແຕ່ກໍບໍ່ມີຄົນມາຊື້ ຈຶ່ງເປັນສາເຫດໜຶ່ງທີ່ເຮັດໃຫ້ການປະຕິບັດຄຳຕັດສິນຂອງສານຄ້າງປະຕິບັດໃນຫຼາຍໆຄະດີ. ດັ່ງນັ້ນ, "ໃນກໍລະນີທີ່ເປັນຫຼັກຊັບຄ້ຳປະກັນ ເມື່ອມີການຕີລາຄາ ແລະ ປະກາດຂາຍຊັບ ພ້ອມທັງປະຕິບັດທຸກຂັ້ນຕອນດັ່ງທີ່ກ່າວມາຂ້າງເທິງແລ້ວ ຫາກຍັງບໍ່ມີບຸກຄົນໃດມາສະເໜີຊື້ ຫົວໜ້າອົງການປະຕິບັດຕ້ອງອອກຄຳສັ່ງມອບຊັບໃຫ້ຜູ້ເປັນເຈົ້າໜີ້ ໂດຍມີການໄລ່ລຽງໜີ້ສິນກັບລາຄາຊັບທີ່ໄດ້ມອບນັ້ນ, ໃນກໍລະນີບໍ່ແມ່ນຫຼັກຊັບຄ້ຳປະກັນ ແຕ່ເຈົ້າໜີ້ເຫັນດີຮັບເອົາຊັບດັ່ງກ່າວເພື່ອໃຊ້ແທນໜີ້

---

[5] ມາດຕາ 24 ຂອງດຳລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເລກທີ 158/ລບ ລົງວັນທີ 4 ມິຖຸນາ 2013

[6] ມາດຕາ 7 ຂອງດຳລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເລກທີ 158/ລບ ລົງວັນທີ 4 ມິຖຸນາ 2013

ສິນ ກໍໃຫ້ອອກຄໍາສັ່ງມອບຊັບດັ່ງກ່າວໃຫ້ເຈົ້າໜີ້, ຖ້າເຈົ້າໜີ້ຫາກບໍ່ເຫັນດີຮັບເອົາກໍໃຫ້ສືບຕໍ່ປະກາດຂາຍຢ່າງກວ້າງຂວາງຈົນກວ່າຈະມີຜູ້ມາຊື້"[7].

"ໃນການປະຕິບັດຄໍາຕັດສິນຂອງສານ ໂດຍສະເພາະແມ່ນການປະກາດຂາຍຊັບທີ່ໄດ້ຍຶດ ຫຼື ອາຍັດມານັ້ນ, ເປັນປະເດັນທີ່ມີຄວາມຫຍຸ້ງຍາກສົມຄວນ ເນື່ອງຈາກວ່າພາຍຫຼັງທີ່ມີການປະກາດຂາຍຊັບດັ່ງກ່າວແລ້ວ ບໍ່ມີບຸກຄົນໃດມາສະເໜີຊື້, ຈຶ່ງເຮັດໃຫ້ການປະຕິບັດຄະດີດັ່ງກ່າວບໍ່ສາມາດສໍາເລັດໄດ້ຕາມຄາດໝາຍທີ່ວາງໄວ້, ໃນປັດຈຸບັນຈຶ່ງເຮັດໃຫ້ຄະດີຄ້າງປະຕິບັດໃນແຕ່ລະປີຫຼາຍສົມຄວນ"[8].

## References:


1. ກົດໝາຍວ່າດ້ວຍການປະຕິບັດຄໍາຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021;
2. ຕໍາລາກໍ່ສ້າງວິຊາຊີບປະຕິບັດຄໍາຕັດສິນຂອງສານ ( ເຫຼັ້ມທີ II: ພາກທັກສະສະເພາະ ) ຂອງສະຖາບັນຍຸຕິທໍາແຫ່ງຊາດ, ປີ 2020.
3. ດໍາລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ເລກທີ 158/ລບ ລົງວັນທີ 4 ມິຖຸນາ 2013;
4. ຄໍາແນະນໍາຂອງລັດຖະມົນຕີກະຊວງຍຸຕິທໍາກ່ຽວກັບການຕີລາຄາ, ການຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄໍາຕັດສິນຂອງສານເລກທີ 447/ກຍ ລົງວັນທີ 5 ເມສາ 2019.


[7] ມາດຕາ 25 ຂອງດໍາລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ເລກທີ 158/ລບ ລົງວັນທີ 4 ມິຖຸນາ 2013

[8] ຕໍາລາກໍ່ສ້າງວິຊາຊີບປະຕິບັດຄໍາຕັດສິນຂອງສານ ( ເຫຼັ້ມທີ II: ພາກທັກສະສະເພາະ ) ຂອງສະຖາບັນຍຸຕິທໍາແຫ່ງຊາດ, ປີ 2020, ໜ້າທີ 46